WA CARES FUND

# ເງິນທຶນການປິ່ນປົວລະຍະຍາວສໍາລັບທຸກໆຄົນ



## 7 ໃນ 10 ຄົນຈະຕ້ອງການການປິ່ນປົວລະຍະຍາວ. ທ່ານຕຽມພ້ອມແລ້ວບໍ່?

ພວກເຮົາສ່ວນຫລາຍຈະຕ້ອງການການປິ່ນປົວລະຍະຍາວແຕ່ວ່າບໍ່ມີທີມທາງທີ່ຈະຈ່າຍມັນ. WA Cares Fund ເປັນໂຄງການໃຫມ່ຂອງລັດທີ່ເຮັດໃຫ້ປະກັນພັຍການປິ່ນປົວລະຍະຍາວມີລາຄາຍ່ອມເຍົາສໍາລັບຄົນຣັດວໍຊິງຕັນທຸກໆຄົນເປັນເທື່ອທໍາອິດ.

ດ້ວຍ WA Cares Fund, ທ່ານສາມາດໄດ້ຮັບການບໍຣິການປິ່ນປົວລະຍະຍາວແລະການອູ້ມຊູທີ່ມີຄຸນຄ່າເຖິງ $36,500 (ດັດແປງແຕ່ລະປີສໍາລັບຄ່າຄອງຊີບຂື້ນ) ຕະລອດຊີວິດຂອງທ່ານ.

WA Cares Fund ເປັນເງິນສະວັດດີການທີ່ທ່ານຫາມາໄດ້ຄ້າຍຄືກັນກັບເງິນປະກັນພັຍສັງຄົມທີ່ຈ່າຍຄ່າຂອງການປິ່ນປົວຢູ່ໃນເຮືອນຂອງທ່ານຫລືສະຖານທີ່ປິ່ນປົວ,ລວມທັງການດັດແປງເຮືອນ,ການສົ່ງອາຫານ,ການຂີ່ຣົດ,ແລະການຝຶກຝົນການເບິ່ງແຍງດູແລ. WA Cares Fund ຊ່ວຍຮັບປະກັນວ່າພວກເຮົາທຸກໆຄົນສາມາດຈ່າຍຄ່າການປິ່ນປົວລະຍະຍາວເມື່ອເວລາພວກເຮົາຕ້ອງການມັນ.



ເງິນເຮັດວຽກ WA ປານກາງ
$52,075/ປີ

ເງິນບໍຣິຈາກປານກາງ
**$302/ປີ**

## ການບໍຣິຈາກ WA Cares Fund

WA Cares Fund ຖືກອອກເງິນທຶນໃຫ້ໂດຍຕົນເອງທັງຫມົດໂດຍການບໍຣິຈາກຂອງພະນັກງານ.ບໍ່ຄືກັນກັບປະກັນພັຍການປິ່ນປົວລະຍະຍາວເອກຊົນ,ຊຶ່ງຕ້ອງມີຄ່າທໍານຽມເຖິງແມ່ນວ່າຫລັງຈາກທ່ານອອກເບັ້ຽບໍານານ,ທ່ານມີແຕ່ບໍຣິຈາກ WA Cares Fund ໃນເວລາທີ່ທ່ານເຮັດວຽກຢູ່ເທົ່ານັ້ນ. ການບໍຣິຈາກຢຸດໃນເວລາທີ່ທ່ານຢຸດເຮັດວຽກ.

## ການເຮັດວຽກເອົາສະວັດດີການ

ທ່ານຈະມີການເຂົ້າເຖິງສະວັດດີການຕະລອດຊີວິດໂດຍການບໍຣິຈາກຢ່າງຫນ້ອຍ 10 ປີໂດຍບໍ່ມີຊ່ວງວ່າງ 5+ ປີ.ທ່ານຍັງສາມາດເຂົ້າເຖິງສະວັດດີການຖ້າຫາກວ່າທ່ານບໍຣິຈາກ 3 ໃນ 6 ປີຜ່ານມາໃນເວລາທີ່ທ່ານຮ້ອງຂໍເອົາ.ບຸກຄົນເກີດກ່ອນປີ 1968 ສາມາດໄດ້ຮັບການເຂົ້າເຖິງ 10% ຕະລອດຊີວິດຂອງຈໍານວນສະວັດດີການເຕັມຈໍານວນສໍາລັບແຕ່ລະປີທີ່ເຂົາເຈົ້າ ບໍຣິຈາກ.

## ເປັນຫຍັງຈຶ່ງບໍຣິຈາກ?

### WA Cares ຮັກສາເງິນອອມສິນຂອງທ່ານໄວ້

ໃຊ້ສະວັດດີການ WA Cares ຂອງທ່ານ – ບໍ່ແມ່ນເງິນ 401k ຫລືເງິນອອມສິນມາຕະລອດຊີວິດຂອງທ່ານ – ເພື່ອຈະຄຸ້ມກັນຄວາມຕ້ອງການໃນການປິ່ນປົວລະຍະຍາວຂອງທ່ານ.

### WA Cares ປ່ອຍໃຫ້ທ່ານເລືອກເອົາ

ດ້ວຍ WA Cares, ຄົນທີ່ທ່ານຮັກສາມາດກາຍເປັນຜູ້ເບິ່ງແຍງດູແລທີ່ຖືກຈ່າຍເງິນຂອງທ່ານຫລືວ່າທ່ານສາມາດຈ້າງເອົາຜູ້ຊ່ວຍປິ່ນປົວຢູ່ເຮືອນ.ທ່ານຈະຈ່າຍຄ່າປັບປຸງເຮືອນໄດ້ອີກ, ການສົ່ງອາຫານ,ແລະຫລາຍໆຢ່າງອີກ.

### WA Cares ປ້ອງກັນຄອບຄົວຂອງທ່ານ

ເມື່ອເວລາທ່ານຕ້ອງການການປິ່ນປົວ,ທ່ານຈະມີການເຂົ້າເຖິງຜູ້ຊ່ວຍປິ່ນປົວຢູ່ເຮືອນທີ່ຊ່ຽວຊານ,ເພື່ອວ່າຜົວເມັຽຫລື ລູກຜູ້ໃຫຍ່ຂອງທ່ານບໍ່ຕ້ອງໄດ້ອອກວຽກງານຂອງເຂົາເຈົ້າເພື່ອຈະເບິ່ງແຍງດູແລທ່ານ.

## 2022 ໂຄງການປັບປຸງໃຫ້ດີຂື້ນ

- ✓ ຜູ້ໃກ້ອອກກິນເບັ້ຽບໍານານເຮັດວຽກໄດ້ເງິນສ່ວນນຶ່ງສໍາລັບແຕ່ລະປີທີ່ເຂົາເຈົ້າເຮັດວຽກ
- ✓ ພະນັກງານຜູ້ທີ່ອາສັຍຢູ່ຕ່າງຣັດສາມາດເລືອກອອກໄປໄດ້
- ✓ ຜົວເມັຽຂອງທະຫານສາມາດເລືອກອອກໄປໄດ້
- ✓ ພະນັກງານທີ່ມີວີຊາທີ່ບໍ່ແມ່ນຄົນເຂົ້າເມືອງສາມາດເລືອກອອກໄປໄດ້
- ✓ ນັກຮົບເກົ່າທີ່ມີຄວາມເສັຽອົງຄະ 70%+ ສາມາດເລືອກອອກໄປໄດ້

## ວັນທີ່ຈຸດສໍາຄັນ

**ໆຈັນວາຣີ 1, 2023**
ຄໍາຮ້ອງຂໍເປີດສໍາລັບກຸ່ມໃຫມ່ທີ່ມີເງື່ອນໄຂໄດ້ຮັບການຍົກເວັ້ນ.

**ຕຸລາ 1, 2023**
ການບໍຣິຈາກເລີ້ມຕົ້ນ. ບຸກຄົນເຮັດວຽກຕົນເອງສາມາດເລືອກເຂົ້າມາໄດ້

**ຕຸລາ 1, 2026**
ການຊ່ວຍເຫລືອກາຍເປັນມີໄວ້ໃຫ້ແກ່ບຸກຄົນທີ່ມີສິດໄດ້ຮັບ, ມີເງື່ອນໄຂໄດ້ຮັບ.

## ຮຽນຮູ້ເພີ້ມເຕີມ

ແວ່ປັຽນ **wacaresfund.wa.gov**
ເພື່ອຈະຮູ້ຈັກເພີ້ມເຕີມກ່ຽວກັບເງິນເຮັດວຽກແລະການທວງເອົາເງິນສະວັດດີການຂອງທ່ານ.

## ສໍາລັບຄໍາຖາມ

ອີແມລ໌
**wacaresfund@dshs.wa.gov**

ໂທຣະສັບ
**844-CARE4WA**